ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----====********====-----

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ **0924 /ອຄ**

ນະຄອນຫລວງວຽງຈັນ,ວັນທີ **04 ມິຖຸນາ 2008**

# ຂໍ້ກຳນົດ
# ວ່າດ້ວຍການຈອງ ແລະ ຮັບຮອງຊື່ວິສາຫະກິດ

- ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ11/ສພຊ,ລົງວັນທີ 09 ພະຈິກ 2005.
- ອີງຕາມຄຳສັ່ງ ຂອງນາຍົກລັດຖະມົນຕີ ກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍ ວ່າດ້ວຍວິສາຫະກິດ ສະບັບເລກທີ 37/ນຍ, ລົງວັນທີ 24 ຕຸລາ 2006.
- ອີງຕາມດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳແລະການຄ້າ ສະບັບເລກທີ188/ນຍ, ລົງວັນທີ 17 ສິງຫາ 2006.

## ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ກຳນົດ :

## ໝວດທີ I
## ຫລັກການທົ່ວໄປ

**ມາດຕາ1: ຈຸດປະສົງ**

ຂໍ້ກຳນົດວ່າດ້ວຍການຈອງ ແລະ ຮັບຮອງຊື່ວິສາຫະກິດໄດ້ກຳນົດຫລັກການຕັ້ງຊື່, ນຳໃຊ້ຊື່ວິສາຫະກິດ ໃຫ້ສອດຄ່ອງຕາມກົດໝາຍວ່າດ້ວຍວິສາຫະກິດ, ສ້າງໃຫ້ເປັນລະບົບຖານຂໍ້ມູນກ່ຽວກັບການອອກໃບອະນຸມັດຈອງຊື່ ແລະ ການຄຸ້ມຄອງຊື່ລວມສູນຢູ່ປະຕູດຽວ, ເພື່ອບໍ່ໃຫ້ມີຊື່ຄຸມເຄືອ, ຄ້າຍຄື ຫລື ຊ້ຳຊ້ອນກັນໃນຂອບເຂດແຂວງ ຫລື ນະຄອນຫລວງ. ສ້າງໃຫ້ເປັນລະບົບການຄຸ້ມຄອງເກັບກຳສັງລວມໃຫ້ມີຄວາມສະດວກວ່ອງໄວ ເພື່ອສົ່ງເສີມ, ຕິດຕາມ, ກວດກາ ບັນດາຫົວໜ່ວຍວິສາຫະກິດແນໃສ່ປົກປ້ອງສິດຜົນປະໂຫຍດແລະຊື່ສຽງຂອງບັນດາຜູ້ປະກອບການທຸລະກິດທີ່ເຄື່ອນໄຫວດຳເນີນທຸລະກິດຢູ່ ສປປ ລາວ.

**ມາດຕາ2: ລັກສະນະແລະຄວາມໝາຍຂອງການຕັ້ງຊື່ວິສາຫະກິດ**

ການຕັ້ງຊື່ວິສາຫະກິດຕ້ອງໃຫ້ຖືກລັກສະນະ ແລະ ໃຫ້ມີຄວາມໝາຍສ່ວນໃດໜຶ່ງກໍ່ໄດ້ ແຕ່

ຕ້ອງໃຫ້ສອດຄ່ອງຕາມກົດໝາຍວ່າດ້ວຍວິສາຫະກິດທີ່ໄດ້ກຳນົດໄວ້ໃນມາດຕາ 10, 11 ແລະ 21 ຊຶ່ງຕ້ອງປະກອບດ້ວຍ ສີ່ ລັກສະນະຄື : ຮູບການ, ຊື່, ນາມ ແລະ ຮູບແບບ ຕິດນຳທຸກຄັ້ງ:

ກ. ຮູບການວິສາຫະກິດ : ໝາຍເຖິງການຈັດຕັ້ງທຸລະກິດທີ່ເປັນພື້ນຖານ ຂອງການສ້າງຕັ້ງ ແລະ ການເຄື່ອນໄຫວທຸລະກິດ ຂອງທຸກປະເພດວິສາຫະກິດ ທີ່ມີໂຄງປະກອບການນຳໃຊ້ທຶນ, ການບໍລິຫານຈັດການ ແລະ ການດຳເນີນທຸລະກິດແຕກຕ່າງກັນ ຊຶ່ງມີ ສາມຮູບການ ເພື່ອນຳໃຊ້ຂຶ້ນຕົ້ນຂອງຊື່ວິສາຫະກິດ ຄື :

- ວິສາຫະກິດສ່ວນບຸກຄົນ
- ວິສາຫະກິດຮຸ້ນສ່ວນ
- ບໍລິສັດ.

ຂ. ຊື່ : ໝາຍເຖິງຊື່ທີ່ຜູ້ປະກອບການກຳນົດຂຶ້ນ ເປັນຊື່ທີ່ມີຄວາມໝາຍຕໍ່ການດຳເນີນທຸລະກິດ ຊຶ່ງຈະເອົາຊື່ບຸກຄົນ, ຫລາຍຄົນ ຫລື ຊື່ທີ່ມີຄວາມໝາຍອື່ນກໍ່ໄດ້ ແຕ່ບໍ່ໃຫ້ເປັນຊື່ ທີ່ເກືອດຫ້າມ.

ຄ. ນາມ : ໝາຍເຖິງສ່ວນໜຶ່ງຂອງຊື່ ທີ່ປະກອບ ເປັນຊື່ວິສາຫະກິດ ຊຶ່ງຜູ້ປະກອບການ ເປັນຜູ້ກຳນົດຂຶ້ນເອງ ເພື່ອບົ່ງບອກຄວາມໝາຍຂອງການດຳເນີນທຸລະກິດ ທີ່ມີລັກສະນະເປັນເຄື່ອງໝາຍການຄ້າ ຫລື ມີລັກສະນະຄວາມໝາຍ ອື່ນໆ ກໍ່ໄດ້ແຕ່ບໍ່ໃຫ້ເປັນນາມທີ່ມີລັກສະນະເກືອດຫ້າມ.

ງ. ຮູບແບບວິສາຫະກິດ : ໝາຍເຖິງການກຳນົດດ້ານໂຄງສ້າງທຶນ, ການບໍລິຫານຈັດການ, ຄວາມຮັບຜິດຊອບໜີ້ສິນຂອງບັນດາຂາຮຸ້ນ ແລະ ຜູ້ຖືຮຸ້ນຊຶ່ງມີ ສີ່ຮູບແບບລົງທ້າຍຊື່ວິສາຫະກິດຄື :

- ວິສາຫະກິດຮຸ້ນສ່ວນ ມີສອງ ຮູບແບບ ຄື: ຮຸ້ນສ່ວນສາມັນ ແລະ ຮຸ້ນສ່ວນຈຳກັດ.
- ບໍລິສັດສັດ ມີສອງຮູບແບບຄື : ຈຳກັດ ( ລວມທັງ ຈຳກັດຜູ້ດຽວ) ແລະ ມະຫາຊົນ.

**ມາດຕາ3: ຂອບເຂດການນຳໃຊ້**

ຂໍ້ກຳນົດສະບັບນີ້ນຳໃຊ້ສະເພາະໃນການຕັ້ງຊື່ວິສາຫະກິດປະເພດວິສາຫະກິດເອກະຊົນ, ວິສາຫະກິດຂອງລັດແລະວິສາຫະກິດປະສົມ, ເພື່ອເປັນບ່ອນອີງໃນການປະກອບເອກະສານແຈ້ງຂຶ້ນທະບຽນວິສາຫະກິດ.

ຖ້າເປັນວິສາຫະກິດສ່ວນບຸກຄົນທີ່ມີເປົ້າໝາຍການສ້າງຕັ້ງ ເພື່ອເຄື່ອນໄຫວດຳເນີນທຸລະກິດດ້ານການຜະລິດ ແລະ ປຸງແຕ່ງ ຈະມີເຄື່ອງໝາຍການຄ້າເປັນຂອງວິສາຫະກິດ, ຫລື ດຳເນີນທຸລະກິດການບໍລິການອື່ນໆ ກໍ່ສາມາດນຳໃຊ້ຂໍ້ກຳນົດສະບັບນີ້.

ສຳລັບສະຫະທິດລວມໝູ່ ຜູ້ຄ້າຂາຍນ້ອຍ ( ຂາຍຍ່ອຍ ) ທຸລະກິດການຄ້າເປັນແຕ່ລະປີ , ຄ້າຂາຍຕາມລະດູການ( ບໍ່ປົກກະຕິ ) ລວມທັງທຸລະກິດການຄ້າ, ການບໍລິການຂະໜາດນ້ອຍແມ່ນບໍ່ຢູ່ໃນຂອບເຂດການນຳໃຊ້ຂໍ້ກຳນົດສະບັບນີ້.

**ມາດຕາ4: ຊື່ວິສາຫະກິດທີ່ເກືອດຫ້າມ**

ຊື່ ວິສາຫະກິດ ທີ່ເກືອດຫ້າມ ນອກຈາກກຳນົດໄວ້ໃນ ມາດຕາ 22 ຂອງກົດໝາຍ ວ່າດ້ວຍວິສາຫະກິດແລ້ວ, ຍັງຫ້າມບໍ່ໃຫ້ຕັ້ງຊື່ວິສາຫະກິດທີ່ມີລັກສະນະດັ່ງນີ້ :

1. ຊື່ທີ່ເປັນເຄື່ອງໝາຍການຄ້າຂອງວິສາຫະກິດອື່ນ ທີ່ໄດ້ໃບອະນຸມັດຮັບຮອງຊື່ວິສາຫະກິດ ແລະ ໄດ້ຂຶ້ນທະບຽນວິສາຫະກິດ ຫລື ໄດ້ຈົດລິຂະສິດກ່ຽວກັບຊື່ດັ່ງກ່າວແລ້ວ.

2. ຊື່ ພ້ອມດ້ວຍນາມມະຍົດ ຫລື ຊື່ ພ້ອມດ້ວຍນາມສະກຸນ ຂອງ ປະທານປະເທດ ຫລື ນາມມະຍົດນາຍົກລັດຖະມົນຕີ ຫລື ຊື່, ນາມ ສະກຸນການນຳ ຂອງ ສປປ ລາວ ໃນອາດີດ ແລະ ປະຈຸບັນ.

3. ຊື່ ພ້ອມດ້ວຍນາມສະກຸນຂອງ ອາດີດເຈົ້າຊີວິດ ຫລື ບັນພະບູລຸດລາວເມື່ອກ່ອນ

4. ຊື່ພ້ອມດ້ວຍນາມມະຍົດ ຫລື ຊື່ ພ້ອມດ້ວຍນາມສະກຸນຂອງວິລະບູລຸດ ຫລື ວິລະຊົນ.

5. ຊື່ກ່ຽວກັບເຫດການປະຕິວັດທີ່ສຳຄັນທາງປະຫວັດສາດ ຫລື ຊື່ວັນບຸນສຳຄັນຕ່າງໆ ຂອງຊາດ.

## ໝວດທີ II
## ການເລືອກ ຊື່ ວິສາຫະກິດ

### ມາດຕາ5: ໂຄງປະກອບຂອງການຕັ້ງ ຊື່ວິສາຫະກິດ

ໂຄງປະກອບຂອງການຕັ້ງຊື່ວິສາຫະກິດ ນອກຈາກທີ່ໄດ້ກຳນົດໃນ ມາດຕາ 2 ຂອງຂໍ້ກຳນົດສະບັບນີ້, ເພື່ອໃຫ້ຜູ້ປະກອບການມີເງື່ອນໄຂໃນການກຳນົດ, ເລືອກຊື່, ຕັ້ງຊື່ວິສາຫະກິດທີ່ມີຄວາມໝາຍ ຕໍ່ການດຳເນີນທຸລະກິດ ຫລື ຄວາມໝາຍອື່ນໆກໍ່ໄດ້ ຫລື ຕາມການເຫັນດີຂອງບັນດາຂາຮຸ້ນ ຫລື ຜູ້ຖືຮຸ້ນທີ່ໄດ້ປະກອບການທຸລະກິດການລົງທຶນຮ່ວມກັນ ແລະ ໂຄງປະກອບຊື່ ລວມຄຳສັບທັງໝົດ ບໍ່ໃຫ້ເກີນ ຊາວຄຳ ແຕ່ຕ້ອງໃຫ້ສອດຄ່ອງ ຕາມເງື່ອນໄຂດັ່ງນີ້ :

1. ຊື່ ວິສາຫະກິດຕ້ອງປະກອບມີ: ຮູບການ, ຊື່, ນາມ ແລະຮູບແບບຕິດນຳທຸກຄັ້ງແຕ່ຊື່ວິສາຫະກິດຄວນໃຫ້ສັ້ນມ່ວນຊົນເຂົ້າໃຈງ່າຍ ຫລື ໃຫ້ມີຄວາມໝາຍສະເພາະກໍ່ໄດ້;

2. ຊື່ ສາມາດຄືກັນໄດ້ ແຕ່ນາມ ຕ້ອງຕ່າງກັນ;

3. ນາມ ກໍ່ສາມາດຄືກັນໄດ້ ແຕ່ຊື່ ຕ້ອງຕ່າງກັນ;

4. ຊື່ ຫຼື ນາມວິສາຫະກິດສາມາດຄືກັນຖ້າບໍ່ຕັ້ງຢູ່ໃນຂອບເຂດນະຄອນ ຫລື ແຂວງດຽວກັນ;

5. ຊື່ ວິສາຫະກິດຕ້ອງບໍ່ຄຸມເຄືອ, ຄ້າຍຄື, ຊ້ຳຊ້ອນກັບຊື່ວິສາຫະກິດອື່ນ ຊຶ່ງເປັນທີ່ຮູ້ຈັກຢ່າງກ້ວາງຂວາງທີ່ມີຢູ່ໃນຂອບເຂດທົ່ວປະເທດແລ້ວ;

6. ຊື່ບໍ່ໃຫ້ຄືກັບວິສາຫະກິດທີ່ໄດ້ຈົດລິຂະສິດ ຫລື ຊື່ ວິສາຫະກິດທີ່ໄດ້ຈົດເປັນເຄື່ອງໝາຍການຄ້າຂອງວິສາຫະກິດອື່ນ ແລະ ໄດ້ແຈ້ງຂຶ້ນທະບຽນວິສາຫະກິດ ຢູ່ ສປປ ລາວ ຖືກຕ້ອງຕາມລະບຽບກົດໝາຍ.

ສຳລັບວິສາຫະກິດທີ່ຕັ້ງຊື່ວິສາຫະກິດຂຶ້ນຕົ້ນດ້ວຍຈຸດປະສົງຂອງການຜະລິດ ຫລື ບົ່ງບອກເຖິງເປົ້າໝາຍ ຂອງການບໍລິການສະເພາະ ຊຶ່ງຈຳເປັນຈະຕ້ອງໄດ້ກຳນົດ ຊື່ ວິສາຫະກິດເຊັ່ນ: ທະນາຄານ, ໂຮງແຮມ, ໂຮງຮຽນ, ໂຮງໝໍ, ໂຮງງານ, ໂຮງຊວດຈຳ, ການຄ້າຂາຍວັດຖຸມີຄ່າ, ສູນບໍລິການ ແລະ ອື່ນໆ ແຕ່ຕ້ອງຕາມດ້ວຍຊື່ ຫລື ນາມ ຫລືລວມທັງຊື່ ແລະ ນາມແລ້ວລົງທ້າຍດ້ວຍຮູບແບບວິສາຫະກິດ ຄຳວ່າຮຸ້ນສ່ວນ ຫລືຮຸ້ນສ່ວນຈຳກັດ ຫລື ຮູບແບບບໍລິສັດຄຳວ່າ ຈຳກັດ,ຈຳກັດຜູ້ດຽວ ຫລື ມະຫາຊົນ.

### ມາດຕາ6: ການເລືອກ ຊື່ວິສາຫະກິດສ່ວນບຸກຄົນ

ການເລືອກ ຫລື ຕັ້ງຊື່ແມ່ນໃຫ້ຂຶ້ນຕົ້ນດ້ວຍຄຳວ່າ : ວິສາຫະກິດສ່ວນບຸກຄົນ ຈາກນັ້ນຈິ່ງລົງທ້າຍດ້ວຍຊື່ ຫລື ນາມ ຫລື ລວມທັງຊື່ ແລະ ນາມ ຫລື ອາດຈະຂຶ້ນຕົ້ນດ້ວຍຮູບການຄຳວ່າ : ວິສາ

ທະກິດກ່ອນແລ້ວ ຈຶ່ງຕາມດ້ວຍຊື່ ຫລື ນາມ ຫລື ລວມທັງຊື່ ແລະ ນາມ ຈາກນັ້ນຈຶ່ງລົງທ້າຍດ້ວຍຄຳວ່າ " ສ່ວນບຸກຄົນ " ກໍ່ໄດ້.

ຊື່ວິສາຫະກິດສ່ວນບຸກຄົນຍັງສາມາດຂື້ນຕົ້ນດ້ວຍຊື່ ຫລື ນາມ ຫລື ລວມທັງຊື່ ແລະ ນາມ ແລ້ວລົງທ້າຍດ້ວຍຮູບແບບຄຳວ່າ " ສ່ວນບຸກຄົນ " ກໍ່ໄດ້.

**ມາດຕາ7: ການເລືອກຊື່ທີ່ຢູ່ໃນຮູບການວິສາຫະກິດຮຸ້ນສ່ວນ**

ການເລືອກ ຫລື ຕັ້ງຊື່ແມ່ນໃຫ້ຂຶ້ນຕົ້ນດ້ວຍຮູບການຄຳວ່າ : ວິສາຫະກິດຮຸ້ນສ່ວນສາມັນ ຫລື ຮຸ້ນສ່ວນຈຳກັດ ຈາກນັ້ນຈຶ່ງຕາມດ້ວຍຊື່ ຫລື ນາມ ຫລື ລວມທັງຊື່ ແລະ ນາມ ຫຼື ຈະຂື້ນຕົ້ນດ້ວຍຄຳວ່າ : ວິສາຫະກິດ ກ່ອນ ຈາກນັ້ນຈຶ່ງຕາມດ້ວຍຊື່ ຫລື ນາມ ຫລື ລວມທັງຊື່ ແລະ ນາມ ແລ້ວຈຶ່ງລົງທ້າຍດ້ວຍຮູບແບບຄຳວ່າ " ຮຸ້ນສ່ວນສາມັນ ຫລື ຮຸ້ນສ່ວນຈຳກັດ " ກໍ່ໄດ້.

ຊື່ວິສາຫະກິດຮຸ້ນສ່ວນຍັງສາມາດຂື້ນຕົ້ນດ້ວຍຊື່ຫລືນາມ ຫລື ລວມທັງຊື່ແລະນາມ ແລ້ວລົງທ້າຍດ້ວຍຄຳວ່າ " ຮຸ້ນສ່ວນສາມັນ ຫລື ຮຸ້ນສ່ວນຈຳກັດ " ກໍ່ໄດ້.

**ມາດຕາ8: ການເລືອກ ຊື່ ທີ່ຢູ່ໃນຮູບການບໍລິສັດ**

ການເລືອກ ຫລື ຕັ້ງຊື່ໃຫ້ຂື້ນຕົ້ນດ້ວຍຮູບການຄຳວ່າ: ບໍລິສັດ ຈາກນັ້ນຕາມດ້ວຍຊື່ ຫລື ນາມ ຫລື ລວມທັງຊື່ ແລະ ນາມ ຈາກນັ້ນຈຶ່ງລົງທ້າຍດ້ວຍຮູບແບບຄຳວ່າ " ຈຳກັດ ( ຫລືຈຳກັດຜູ້ດຽວ ) ຫລື ມະຫາຊົນ " ສ່ວນຄຳວ່າຜູ້ດຽວຖ້າບໍ່ຢາກລະບຸໃສ່ໃນຊື່ວິສາຫະກິດກໍ່ໄດ້, ແຕ່ຕ້ອງ ລະບຸຮູບແບບວິສາຫະກິດ ໃສ່ໃນໃບທະບຽນວິສາຫະກິດ.

ສຳລັບຊື່ຂອງບໍລິສັດລັດ ແລະ ບໍລິສັດປະສົມແມ່ນໃຫ້ຂື້ນຕົ້ນ ດ້ວຍຮູບການຄຳວ່າບໍລິສັດລັດ ແລະ ບໍລິສັດປະສົມ ຕາມດ້ວຍຊື່ ຫລື ນາມ ຫລື ລວມທັງຊື່ ແລະ ນາມ ( ບໍ່ມີຮູບແບບ ).

## ໝວດທີ III
## ການສະເໜີຈອງຊື່

**ມາດຕາ9: ການຈອງຊື່ວິສາຫະກິດ**

ການຈອງຊື່ວິສາຫະກິດແມ່ນການສະເໜີຂໍການຮັບຮອງຊື່ ຈາກບັນດາຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ໃນຂອບເຂດທົ່ວປະເທດ ເພື່ອນຳໃຊ້ເປັນບ່ອນອີງໃນການປະກອບເອກະສານແຈ້ງຂື້ນທະບຽນວິສາຫະກິດ ຂອງບຸກຄົນ ຫລື ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ.

ຊື່ວິສາຫະກິດສາມາດສະເໜີໄດ້ ສາມຊື່ ເປັນພາລາວ ເພື່ອໃຫ້ມີຫລາຍເງື່ອນໄຂໃນການຄັດເລືອກ, ຖ້າຂຽນເປັນພາສາສາກົນ ( ພາສາອັງກິດ ຫລື ຝຣັ່ງ ) ຖ້າມີ.

**ມາດຕາ10: ການປະກອບເອກະສານຂໍຈອງຊື່ ວິສາຫະກິດ**

ການປະກອບເອກະສານສະເໜີຈອງ ຊື່ ວິສາຫະກິດ ມີສອງເງື່ອນໄຂດັ່ງນີ້ :

ກ. ສຳລັບວິສາຫະກິດ ສະເໜີສ້າງຕັ້ງໃໝ່ ຕ້ອງປະກອບເອກະສານດັ່ງນີ້:

1. ຄຳຮ້ອງສະເໜີຈອງຊື່ວິສາຫະກິດ 02 ສະບັບ;

2. ສັນຍາສ້າງຕັ້ງ ວິສາຫະກິດ 02 ສະບັບ ( ຍົກເວັ້ນວິສາຫະກິດສ່ວນບຸກຄົນ ແລະ ບໍລິສັດ

ຈຳກັດຜູ້ດຽວ ).

3. ໃບມອບສິດ ຫລື ໃບມອບສັນທະ 02 ສະບັບ ( ກໍລະນີໃຫ້ບຸກຄົນອື່ນມາສະເໜີ );

ຂ. ສຳລັບວິສາຫະກິດທີ່ມີທະບຽນວິສາຫະກິດ ຕາມກົດໝາຍວ່າດ້ວຍທຸລະກິດ ຕ້ອງປະກອບ ຄືນໃໝ່ ເພື່ອໃຫ້ສອດຄ່ອງຕາມກົດໝາຍວ່າດ້ວຍວິສາຫະກິດດັ່ງນີ້ :

1. ຄຳຮ້ອງສະເໜີຈອງຊື່ວິສາຫະກິດ 02 ສະບັບ;

2. ສັນຍາສ້າງຕັ້ງ ວິສາຫະກິດ 02 ສະບັບ ( ຍົກເວັ້ນວິສາຫະກິດສ່ວນບຸກຄົນ ແລະ ບໍລິສັດ ຈຳກັດຜູ້ດຽວ).

3. ໃບມອບສິດ ຫລື ໃບມອບສັນທະ 02 ສະບັບ ( ກໍລະນີໃຫ້ບຸກຄົນອື່ນມາສະເໜີ );

4. ສຳເນົາໃບທະບຽນວິສາຫະກິດ ແລະ ໃບທະບຽນອາກອນຂອງສົກປີຜ່ານມາ ຫລື ປະຈຸບັນຢ່າງລະ 02 ສະບັບ

5. ສຳເນົາການຢັ້ງຢືນ ທີ່ກ່ຽວຂ້ອງກັບຊື່ວິສາຫະກິດ, ໄດ້ຈົດເປັນ ລິຂະສິດ ຫລື ເປັນ ເຄື່ອງໝາຍການຄ້າ.

**ມາດຕາ11: ການປະກອບ ເອກະສານສະເໜີຕໍ່ອາຍຸ ໃບຮັບຮອງຊື່ ແລະ ຂໍດັດແກ້ຊື່ວິສາຫະກິດ.**

ການສະເໜີ ຕໍ່ອາຍຸໃບຮັບຮອງຊື່ ແລະ ຂໍດັດແກ້ ຊື່ວິສາຫະກິດ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບສະເໜີ (ພ້ອມດ້ວຍເຫດຜົນ) 02 ສະບັບ.

2. ໃບຮັບຮອງຊື່ ວິສາຫະກິດ 01 ສະບັບ

3. ໃບມອບສິດ ຫລື ໃບມອບສັນທະ 02 ສະບັບ (ກໍລະນີໃຫ້ບຸກຄົນອື່ນມາສະເໜີ).

**ມາດຕາ12: ຂັ້ນຕອນໃນການອະນຸມັດ**

ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ໃນຂອບເຂດທົ່ວປະເທດ ມີໜ້າທີ່ຮັບການບໍລິການ ກ່ຽວກັບການສະເໜີຈອງຊື່, ພິຈາລະນາອະນຸມັດ ແລະ ອອກ ໃບຮັບຮອງຊື່ ວິສາຫະກິດຕາມຂັ້ນຄຸ້ມຄອງດັ່ງນີ້ :

ກ. ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ຂັ້ນນະຄອນຫລວງ.

ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ຂັ້ນນະຄອນຫລວງ ຮັບຜິດຊອບຄຸ້ມຄອງຖານຂໍ້ມູນຊື່ວິສາຫະກິດລວມສູນປະຕູດຽວ ກ່ຽວກັບການອະນຸມັດ ຈອງຊື່ວິສາຫະກິດ ແລະ ແຈ້ງຕອບປະຕິເສດການຈອງຊື່ ໃນຂອບເຂດທົ່ວປະເທດ ຊຶ່ງມີໜ້າວຽກຕົ້ນຕໍລະອຽດດັ່ງນີ້ :

- ຮັບບໍລິການ ກ່ຽວກັບການສະເໜີຈອງຊື່ ວິສາຫະກິດ ໃນຂອບເຂດທົ່ວປະເທດ.
- ຮັບບໍລິການກ່ຽວກັບການສະເໜີ ແລະ ຢັ້ງຢືນການຈອງຊື່ຂອງຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ຂັ້ນແຂວງໃນຂອບເຂດທົ່ວປະເທດ.
- ພິຈາລະນາອອກໃບອະນຸມັດຈອງຊື່ ແລະ ໃບຮັບຮອງຊື່ວິສາຫະກິດ ( ຕໍ່ຜູ້ທີ່ມາສະເໜີໂດຍກົງ)

ຖ້າຫາກການປະກອບເອກະສານສະເໜີຈອງຊື່ຄົບຖ້ວນ ແລະ ຊື່ທີ່ສະເໜີບໍ່ຂັດກັບມາດຕາ 22 ກົດໝາຍວ່າດ້ວຍ ວິສາຫະກິດ ແລະ ມາດຕາ 4 ຂໍ້ກຳນົດສະບັບນີ້ ຕ້ອງອອກໃບອະນຸມັດຈອງຊື່ ຫລື ໃບຮັບຮອງຊື່ ພ້ອມແຈ້ງແລະຈັດສົ່ງໃຫ້ພາຍໃນ ສອງ ວັນລັດຖະການ.

ຂ ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ຂັ້ນແຂວງ

ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ຂັ້ນແຂວງ ມີໜ້າທີ່ ຮັບບໍລິການ ຜູ້ມາສະເໜີຈອງຊື່ ວິສາຫະກິດ ແລະ ອອກໃບຮັບຮອງຊື່ ວິສາຫະກິດ ຊຶ່ງມີລາຍລະອຽດດັ່ງນີ້ :

- ຮັບບໍລິການກ່ຽວກັບການສະເໜີຈອງຊື່ ວິສາຫະກິດ.
- ອອກໃບຮັບຮອງຊື່ວິສາຫະກິດອີງຕາມໃບອານຸມັດຈອງຊື່ວິສາຫະກິດ ຈາກຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ຂັ້ນນະຄອນຫລວງ.
- ແຈ້ງຕອບປະຕິເສດກ່ຽວກັບການຈອງຊື່ ທີ່ຂັດກັບມາດຕາ 22 ກົດໝາຍວ່າດ້ວຍ ວິສາຫະກິດ ແລະ ມາດຕາ 4 ຂໍ້ກຳນົດສະບັບນີ້.

ຖ້າຫາກ ການປະກອບ ເອກະສານຄົບຖ້ວນ ຕ້ອງຢັ້ງຢືນກ່ຽວກັບການສະເໜີ ເພື່ອຂໍໃບອະນຸມັດຈອງຊື່ ນຳຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ຂັ້ນນະຄອນຫລວງ ພາຍໃນໜຶ່ງວັນລັດຖະການ, ເມື່ອໄດ້ໃບອະນຸມັດຈອງຊື່ ຫລື ໃບຕອບປະຕິເສດ, ຕ້ອງອອກໃບຮັບຮອງຊື່ ຫລື ແຈ້ງຕອບປະຕິເສດ ພາຍໃນໜຶ່ງວັນລັດຖະການ.

**ມາດຕາ13: ອາຍຸການນຳໃຊ້ ໃບຮັບຮອງຊື່ ວິສາຫະກິດ**

ໃບຮັບຮອງຊື່ວິສາຫະກິດມີອາຍຸການນຳໃຊ້ພາຍໃນ 90 ວັນ ນັບແຕ່ວັນທີ່ລົງລາຍເຊັນເປັນຕົ້ນໄປ ແລະ ສາມາດຕໍ່ອາຍຸການນຳໃຊ້ໄດ້ 30 ວັນ.

ພາຍຫລັງໄດ້ໃບຮັບຮອງຊື່ວິສາຫະກິດຕ້ອງປະກອບເອກະສານແຈ້ງຂຶ້ນທະບຽນວິສາຫະກິດ, ຖ້າບໍ່ມາແຈ້ງຂຶ້ນທະບຽນວິສາຫະກິດ ຫລື ບໍ່ມາຂໍຕໍ່ອາຍຸການນຳໃຊ້ໃບຮັບຮອງຊື່ວິສາຫະກິດພາຍໃນເວລາ ທີ່ກຳນົດໄວ້ຖືວ່າເປັນການສະຫລະສິດໃນການນຳໃຊ້ໃບຮັບຮອງຊື່ວິສາຫະກິດ ແລະ ຫ້ອງການເຈົ້າໜ້າທີ່ທະບຽນວິຫະກິດມີສິດອອກໃບຮັບຮອງຊື່ວິສາຫະກິດຄືນໃໝ່ໃຫ້ບຸກຄົນ ຫລື ນິຕິບຸກ ຄົນທີ່ມາສະເໜີຈອງຊື່ນັ້ນໄດ້.

## ໝວດທີ IV
## ສິດ ແລະ ໜ້າທີ່ ໃນການນຳໃຊ້ຊື່ ວິສາຫະກິດ

**ມາດຕາ14: ສິດ ແລະ ໜ້າທີ່ໃນການນຳໃຊ້ຊື່ວິສາຫະກິດ**

ຜູ້ທີ່ໄດ້ຮັບໃບຮັບຮອງຊື່ວິສາຫະກິດມີສິດ ແລະ ໜ້າທີ່ດັ່ງນີ້ :

1. ນຳໃຊ້ຊື່ວິສາຫະກິດຕາມອາຍຸການຂອງໃບຮັບຮອງຊື່ວິສາຫະກິດ;
2. ນຳໃຊ້ຊື່ວິສາຫະກິດໄດ້ຢ່າງຖາວອນກໍ່ຕໍ່ເມື່ອໄດ້ແຈ້ງຂຶ້ນທະບຽນວິສາຫະກິດ;
3. ສະເໜີຕໍ່ຫ້ອງການເຈົ້າໜ້າທີ່ທະບຽນວິສາຫະກິດ ຖ້າຫາກເຫັນວ່າມີການອອກໃບຮັບຮອງຊື່ວິສາຫະກິດຊ້ຳຊ້ອນ, ຄ້າຍກັນ ຫລື ຄືກັນ ຢູ່ພາຍໃນນະຄອນຫລວງ ຫລື ແຂວງ ດຽວກັນ.

**ມາດຕາ15: ຂໍ້ຫ້າມໃນການນຳໃຊ້ ໃບຮັບຮອງຊື່ ວິສາຫະກິດ**

ບັນດາຂໍ້ຫ້າມກ່ຽວກັບການນຳໃຊ້ໃບຮັບຮອງຊື່ວິສາຫະກິດມີດັ່ງນີ້ :

1. ບໍ່ໃຫ້ເອົາໃບຮັບຮອງຊື່ວິສາຫະກິດມອບ ຫລື ໂອນໃຫ້ບຸກຄົນ ຫລື ນິຕິບຸກຄົນອື່ນນຳໃຊ້,
2. ຫ້າມປ່ຽນແປງເນື້ອໃນທັງໝົດ ທີ່ ໄດ້ກຳນົດໄວ້ໃນໃບຮັບຮອງຊື່ ວິສາຫະກິດ;

3. ຫ້າມໂຄສະນາ ຫລື ຂຶ້ນປ້າຍຊື່ວິສາຫະກິດ ກ່ອນການແຈ້ງຂຶ້ນທະບຽນວິສາຫະກິດ;

4. ຫ້າມບໍ່ໃຫ້ນໍາໃຊ້ໃບຮັບຮອງຊື່ວິສາຫະກິດ ໄປໃນທາງທີ່ຂັດກັບລະບຽບກົດໝາຍອື່ນໆ ທີ່ກໍານົດໄວ້.

ຖ້າບຸກຄົນ ຫລື ນິຕິບຸກຄົນໃດ ນໍາໃຊ້ໃບຮັບຮອງຊື່ວິສາຫະກິດ ທີ່ບໍ່ສອດຄ່ອງຕາມລະບຽບກົດໝາຍທີ່ກໍານົດໄວ້ ຖືວ່າການນໍາໃຊ້ໃບຮັບຮອງຊື່ດັ່ງກ່າວເປັນໂມຄະ ແລະ ຈະຖືກປະຕິບັດຕາມ ມາດຕາ 240,241,242 ແລະ 243 ຂອງກົດໝາຍວ່າດ້ວຍວິສາຫະກິດຫລື ລະບຽບກົດໝາຍອື່ນໆ ທີ່ກ່ຽວຂ້ອງ.

## ໝວດທີ V
## ການຈັດຕັ້ງປະຕິບັດ

### ມາດຕາ16: ການຈັດຕັ້ງປະຕິບັດ

ມອບໃຫ້ກົມການຄ້າພາຍໃນ ແລະ ບັນດາພະແນກອຸດສາຫະກໍາ ແລະ ການຄ້າແຂວງ ຈັດຕັ້ງປະຕິບັດຂໍ້ກໍານົດສະບັບນີ້ຢ່າງເຂັ້ມງວດ.

ບັນດາອົງການຈັດຕັ້ງ,ຫົວໜ່ວຍທຸລະກິດແລະທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດ.

### ມາດຕາ17: ຜົນສັກສິດ

ຂໍ້ກໍານົດສະບັບນີ້ມີຜົນສັກສິດນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີວ່າການ**
**ກະຊວງອຸດສາຫະກໍາ ແລະ ການຄ້າ**

ດຣ. ນາມ ວິຍາເກດ